ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ **3652** /ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ **22 ຕຸລາ 2024**

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,

ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງສະພາບໍລິຫານ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.
- ອີງຕາມມະຕິຕົກລົງໝູນວຽນເປັນເອກະພາບ ຂອງສະພາບໍລິຫານ ຄັ້ງວັນທີ 22 ຕຸລາ 2024.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງສະພາບໍລິຫານ ຄັ້ງວັນທີ ວັນທີ **22 ຕຸລາ 2024**, ມີລາຍລະອຽດລຸ່ມນີ້:

1. ຮັບຮອງການແຕ່ງຕັ້ງຮັກສາການຜູ້ອຳນວຍການໃຫຍ່ ແລະ ກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າທີ່ພ້ົນຈາກການຮັບອຸດໜູນບຳເນັດ, ອາຍຸການຂອງກຳມະການສະພາບໍລິຫານບໍລິສັດ ແລະ ການດັດແກ້ກົດລະບຽບ ຂອງບໍລິສັດ ມາດຕາ 9 ວ່າດ້ວຍກຳມະການສະພາບໍລິຫານ ດັ່ງນີ້:

1) ແຕ່ງຕັ້ງ ທ່ານ ດາວວຽງ ສຸນັນທະລາດ ເປັນຮັກສາການຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທັງເປັນກຳມະການສະພາບໍລິຫານຜູ້ໃໝ່ ເພື່ອສືບຕໍ່ປະຕິບັດໜ້າທີ່ບໍລິຫານບໍລິສັດແທນກຳມະການສະພາບໍລິຫານຜູ້ເກົ່າທີ່ພ້ົນຈາກການຮັບອຸດໜູນບຳເນັດ ແລະ ກຳນົດອາຍຸການຂອງກຳມະການສະພາບໍລິຫານບໍ່ເກີນສອງປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມຜູ້ຖືຮຸ້ນ ເປັນຕົ້ນໄປ.

2) ດັດແກ້ກົດລະບຽບຂອງບໍລິສັດ ມາດຕາ 9: ວ່າດ້ວຍກຳມະການສະພາບໍລິຫານ ເພື່ອເພີ່ມ ແລະ ປ່ຽນຊື່-ທີ່ຢູ່ ຂອງກຳມະການສະພາບໍລິຫານຜູ້ໃໝ່ປ່ຽນແທນຜູ້ເກົ່າ.

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼື ຄຳສັ່ງໃຫ້ດັດແກ້ ແລະ ໃຫ້ນຳເລື່ອງດັ່ງກ່າວສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາຮັບຮອງຕາມລະບຽບການ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖື,

ປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸລິວັດ ສຸວັນນະຈູມຄຳ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la